# ປູກໄມ້ສັກ ແບບດ່ຽວໃນລະບົບກະສິກຳ ແລະ ປ່າໄມ້

ການທົດລອງນີ້ມີເປົ້າໝາຍເພື່ອ ເຮັດໃຫ້ການຜະລິດພືດກະສິກຳ ແລະ ການປູກໄມ້ຢືນຕົ້ນ ອຸດສະຫະກຳ ມີຄວາມປະສົມປະສານກັນ ເປັນລະບົບກະສິກຳ ແລະ ປ່າໄມ້; ເພື່ອຕິດຕາມ ແລະ ປະເມີນ ຄວາມອາດສາມາດ ໃນການຍອມຮັບເຕັກນິກການປູກໄມ້ສັກ ຊຶ່ງຈະມີ ການພັດທະນານຳໃຊ້ໃນວົງກວ້າງຕໍ່ໄປ.

## ຂັ້ນຕອນທາງດ້ານເຕັກນິກວິທີການ

ນຳໃຊ້ວິທີການທີ່ງ່າຍດາຍໃນການສຶກສາ ຄື : ທຳການແຈກຢາຍເບ້ຍໄມ້ສັກ ໃຫ້ແຕ່ລະຄອບຄົວ ຈຳນວນ 50 ເບ້ຍ ຕໍ່ຄອບຄົວ ໂດຍແນະນຳໃຫ້ປູກໃສ່ອ້ອມຮອບເນື້ອທີ່ ຫຼື ປູກເປັນຈຸ້ມ ຢູ່ບ່ອນທີ່ບໍ່ສາມາດ ຫຼື ບໍ່ເໝາະສົມກັບການປູກພືດກະສິກຳ ເຊັ່ນ : ບ່ອນທີ່ຊຸ່ມເກີນໄປ ( ແຄມຕາຝັ່ງ ), ມີຫີນຫຼາຍ ເປັນຕົ້ນ.

## 1. ຜົນໄດ້ຮັບ :

ການຈະເລີນເຕີບໂຕຂອງໄມ້ສັກ ໂດຍສະເລ່ຍຈະຢູ່ໃນເກນທີ່ດີ ໂດຍມີລວງສູງ 254,3 ຊຕມ ແລະ ໜ້າຕັດຂວາງເອິກ 4,4 ຊຕມ. ແຕ່ໄມ້ສັກທີ່ປູກ ມີເປີເຊັນລອດຕາຍ ຕໍ່າ ( 56,7% ), ສາເຫດຕົ້ນຕໍແມ່ນ ເບ້ຍທີ່ນຳໄປປູກ ມີຂະໜາດນ້ອຍ ແລະ ຄວາມເອົາໃຈໃສ່ຂອງຄອບຄົວ ບໍ່ສູງເທົ່າທີ່ຄວນ.



ຊາວບ້ານຈະໃຫ້ທັດສະນະຕໍ່ລະບົບການທົດລອງນີ້ ວ່າ : ຢາກມີໄມ້ສັກປູກສຳລັບນຳໃຊ້ໃນອານາຄົດ, ແຕ່ມີຂໍ້ຫຍຸ້ງຍາກ ຄື: ເວລາທີ່ເຮົາບໍ່ໄດ້ເຮັດການຜະລິດຢູ່ທີ່ນັ້ນແລ້ວ ເວລາທີ່ຄອບຄົວຜູ້ອື່ນ ກັບເຂົ້າມາທຳການຜະລິດ ໃນເນື້ອທີ່ຕິດກັນ ເຂົາຈະຖາງ ແລະ ຈູດ ຊຶ່ງເຮັດໃຫ້ເບ້ຍໄມ້ ທີ່ປູກໄວ້ຖືກຈູດຕາຍໄດ້; ຢາກໃຫ້ສະນັບສະໜູນເບ້ຍ ໄມ້ໃຫ້ຫຼາຍຂຶ້ນ ຢ່າງໜ້ອຍຕ້ອງ ໃຫ້ຮອບຈອດເນື້ອທີ່ ຫຼື ດີແທ້ ຢາກໄດ້ໃຫ້ພຽງພໍທັງໝົດເນື້ອທີ່ ຊຶ່ງຕ້ອງການປູກໄມ້ ( ເປັນບ່ອນທີ່ເຫັນວ່າປູກພືດ ກະສິກຳບໍ່ໄດ້ດີ ); ຢາກໃຫ້ມີການ ສະໜອງເບ້ຍໄມ້ໃຫ້ແກ່ ທຸກໆຄອບຄົວ ເພາະຈະມີການຄຸ້ມຄອງດ້ານສັດລ້ຽງ ແລະ ໄຟປ່າ ຮ່ວມກັນດີຂຶ້ນ.

ຄຳຕອບສ່ວນໃຫຍ່ຈະບອກວ່າ: ມັກ ແລະ ເຫັນດີເຮັດ ແຕ່ຂໍໃຫ້ຊາວບ້ານຜູ້ອື່ນໆ ເຮັດໄປພ້ອມໆນຳກັນ ຍ້ອນວ່າຈະມີການຊ່ວຍກັນ ໃນການປ້ອງກັນ ການທຳລາຍຈາກສັດ ແລະ ໄຟປ່າ.

## 2. ບົດຮຽນທີ່ຖອດຖອນໄດ້ :

ປະເດັນຕ່າງໆ ທີ່ຄວນຕ້ອງພິຈາລະນາສໍາລັບການທີ່ຈະທໍາການທົດສອບຄືນໃນຕໍ່ໜ້າ :

- ຈໍານວນເບັ້ຍໄມ້ທີ່ນໍາເຂົ້າມາເປັນສິ່ງທົດລອງ ຍັງມີໜ້ອຍ ດັ່ງນັ້ນ, ຄວນໃຫ້ເພີ້ມຈໍານວນ ຊຶ່ງອາດຈະຕ້ອງ ຈອດຮອບ ທຸກດ້ານເນື້ອທີ່ ( ເຮັດໃຫ້ຊາວບ້ານມີຄວາມກະຕື ລືລົ້ນຕື່ມ ), ແຕ່ການເກັບຂໍ້ມູນອາດຈະ ສຸ່ມ ຕົວຢ່າງເອົາ.
- ການທົດລອງຍັງບໍ່ໄດ້ພິຈາລະນາເຖິງຄຸນນະພາບເບັຍໄມ້ຢ່າງເຕັມທີ່ ເຮັດໃຫ້ມີການລຸດໂຕນກັນຫຼາຍທາງດ້ານການຈະເລີນເຕີບໂຕ, ດັ່ງນັ້ນ ເບັ້ຍໄມ້ຄວນຈະມີຂະນາດເທົ່າໆກັນ.
- ການທົດລອງຄວນເຮັດເປັນ 2 ຮູບແບບ ( 2 ສິ່ງທົດລອງແຕກຕ່າງກັນຊັດເຈນ ) ຄື : ປູກແບບເປັນຈຸ້ມ ແລະ ເປັນແບບຢາຍຕາມຂອບແຄມເນື້ອທີ່. ໂດຍໃຫ້ມີຊ້ຳ ຖືກຕ້ອງຕາມລະບົບການທົດລອງ.

## 3. ຂໍ້ສະຫຼຸບ

ຈຸດດີ ຂອງຮູບແບບການປູກໄມ້ສັກ ແບບດ່ຽວ ແມ່ນວ່າ ຊາວກະສິກອນຍັງສາມາດຮັກສາເນື້ອທີ່ປູກຝັງພືດອື່ນໆໄວ້ໄດ້, ໃນປະລິມານທີ່ພຽງພໍ ຍ້ອນໄມ້ສັກແມ່ນປູກຢູ່ຕາມແຄມຮົ້ວ ຫຼື ບ່ອນທີ່ບໍ່ເໝາະສົມສໍາລັບປູກພືດອື່ນຢູ່ແລ້ວ; ໄມ້ຈະມີການເຕີບໂຕດີ ຍ້ອນໄດ້ຮັບທາດອາຫານ ແລະ ແສງສະຫວ່າງພຽງພໍ. ກົງກັນຂ້າມຂໍ້ເສຍຂອງການປູກຮູບແບບດັ່ງກ່າວນີ້ແມ່ນ :

- ຕົ້ນໄມ້ບໍ່ສູງຍ້ອນບໍ່ຖືກບຽດບັງຈາກຕົ້ນອື່ນ, ຈະແຕກກິ່ງຫງ່າຫຼາຍ ຊຶ່ງຕ້ອງໄດ້ໃຊ້ແຮງງານເພີ້ມສໍາລັບການຕັດແຕ່ງ,
- ການປູກ ລຽບຕາມຊາຍແດນນີ້, ຊາວບ້ານຈະອະນາໄມ ພື້ນທີ່ປູກພືດຂອງຕົນ ພຽງແຕ່ໃນຂອບເຂດ ຂອງຕົນເອງເທົ່ານັ້ນ ສ່ວນຝາກກົງກັນຂ້າມ ( ບ່ອນທີ່ບໍ່ມີ ການຜະລິດ ), ຈະເປັນປ່າຣົກ ຊຶ່ງເປັນອຸປະສັກໃຫ້ແກ່ການເຕີບໂຕຂອງເບັຍໄມ້ສັກ.
- ການປູກໄມ້ຮູບແບບນີ້ ຕ້ອງໄປຄຽງຄູ່ກັບການປູກພືດຄົງທີ່ ແລະ ຕ້ອງທໍາການຜະລິດເປັນກຸ່ມໆໄປພ້ອມກັນ ຖ້າບໍ່ດັ່ງນັ້ນ ໄມ້ທີ່ປູກຈະມີຄວາມສ່ຽງຕໍ່ການຖືກທໍາລາຍ ຈາກການຖາງ ແລະ ຈູດ. ເວລາທີ່ຄອບຄົວອື່ນກັບມາທໍາການຜະລິດຢູ່ເນື້ອທີ່ຂ້າງຄຽງ, ໃນເບື້ອງຕົ້ນການຫັນປ່ຽນລະບົບການຜະລິດນີ້ ອາດຈະມີການຍຸ້ງຍາກ ແລະ ຕ້ອງໄດ້ອອກແຮງປຸກລະດົມຢ່າງຈິງຈັງ ຢ່າງໃດກໍຕາມ, ຈາກຈໍານວນຕົ້ນໄມ້ ທີ່ເຫຼືອ ແລະ ອັດຕາການເຕີບໂຕ ເຖິງປະຈຸບັນຈະສາມາດຄາດຄະເນໄປ ລ່ວງໜ້າອີກເຖິງ 18 ຫຼື 20 ປີໄດ້, ເວລານັ້ນ ຖ້າຫາກໄມ້ສັກທີ່ໄດ້ປູກອ້ອມເນື້ອທີ່ທໍາການຜະລິດທັງໝົດ ( ປະມານ 1 ຮຕ ເປີເຊັນລອດຕາຍ 50% ຈະມີ ຫຼາຍກ່ວາ 100 ຕົ້ນ ) ສາມາດຂາຍໄດ້ຫຼາຍກ່ວາ 10 ລ້ານກີບ ພາຍຫຼັງ 18 - 20 ປີ. ຊຶ່ງຖືວ່າເປັນສິ່ງທີ່ ຊາວກະສິກອນ ຄວນຈະໄດ້ນໍາໃຊ້ ເພາະເຖິງຢ່າງໃດການປູກໄມ້ ແບບນີ້ບໍ່ໄດ້ເປັນອຸປະສັກ ຕໍ່ການຜະລິດພືດກະສິກໍາ ໂດຍສະເພາະໃນບໍລິເວນເນື້ອທີ່ຊຶ່ງໄດ້ຖາງ ຈູດທັງໝົດນັ້ນ ມີບາງ ບ່ອນຊຶ່ງບໍ່ເໝາະກັບ ການປູກພືດກະສິກໍາ ( ບ່ອນທີ່ມີ ຫີນຫຼາຍ, ບ່ອນເປັນເຫວຊັນ ແຄມຫ້ວຍ...) ພ້ອມດຽວກັນຖ້າທຸກຄົນ ຫາກນໍາໃຊ້ຮູບ ແບບການຜະລິດແບບນີ້ ຈະເຮັດໃຫ້ ທັດສະນີຍະພາບພື້ນທີ່ ມີຄວາມສົມບູນຂຶ້ນ ຢ່າງໜ້ອຍກໍເພີ້ມຄວາມ ຫຼາກຫຼາຍ ທາງຊີວະນາໆພັນຂຶ້ນ ໃນລະດັບ ໃດນຶ່ງ.


| | | |
|---|---|---|
| ໂດຍ: 1. ທ. ສົມພະຈັນ ວົງພະສຸວັນ | ສູນຄົ້ນຄ້ວາປ່າໄມ້ | ໂທ: 020 5774103 |
| 2. ທ. ຄໍາຫຼ້າ ລັດສະໝີ | ປະສານງານປະຈໍາເມືອງ ໂພນໄຊ | 020 5894185 |